ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 32 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 9 ສິງຫາ 2016


ສຳນັກງານ ຄຄຊ
ລາຍຮັບ ເລກທີ: 0784
ວັນທີ: 11 AUG 2016
ໂທລະສັບ 021 217770


# ລາຍງານການເຄື່ອນໄຫວປະຈຳອາທິດ

# ທີ 25/07/2016 ຫາ 29/07/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

# ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແຕ່ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກຜູ້ຂໍສະຫວັດດີການວ່າງງານຄັ້ງທຳອິດສິ້ນສຸດວັນທີ 23/7/2016 ເພີ່ມຂຶ້ນເປັນ 266.000 ຄົນຈາກ 252.000 ຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 25/07/2016 | ອາທິດນີ້ 29/07/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1027 | 1,1105 | -0,70% |
| ໂດລາ/ເຢນ | 106,09 | 103,56 | 2,44% |
| ໂດລາ/ບາດ | 34,930 | 34,810 | 0,34% |
| ໂດລາ/ເປໂຊ | 47,08 | 47,12 | -0,08% |
| ໂດລາ/ຣູເປັຍ | 13.107,00 | 13.097,00 | 0,08% |
| ໂດລາ/ໂດລາສິງກະໂປ | 1,3558 | 1,3506 | 0,39% |
| ໂດລາ/ຢວນ | 6,6715 | 6,6510 | 0,31% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 7,96% ຈາກ 47,38 ໂດລາ/ບາເຣວ ມາເປັນ 43,61 ໂດລາ/ບາເຣວ ພາຍຫຼັງປະເທດອີຣັກສົ່ງອອກນ້ຳມັນດິບຈາກທ່າສົ່ງອອກນ້ຳມັນທາງທິດໃຕ້ຂອງປະເທດເພີ່ມຂຶ້ນ 100.000 ບາເຣວ/ວັນ ມາເປັນ 3,28 ລ້ານ

ບາເຣວ ໃນເດືອນ 7/2016 ຊຶ່ງເປັນປະເທດທີ່ສົ່ງອອກນ້ຳມັນເປັນອັນດັບ 2 ໃນກຸ່ມປະເທດສະມາຊິກ OPEC. ສຳລັບລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,58% ຈາກ 1.325,63 ມາເປັນ 1.333,26 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,10% ສຳລັບອັດຕາ ທຫກ ແລະ ອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,42% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,40% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,70% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,92% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,41% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,96% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 22/07/2016 | | | ອາທິດນີ້ 29/07/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.090,40 | 8.120,00 | 8.104,35 | 8.086,15 | 8.116,99 | 8.096,23 | 0,05% | 0,04% | 0,10% |
| ບາດ | 231,92 | 233,40 | 232,95 | 232,77 | 234,24 | 233,94 | -0,36% | -0,36% | -0,42% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.120,98 | 8.147,90 | 8.134,44 | 8.113,27 | 8.139,40 | 8.126,33 | 0,10% | 0,10% | 0,10% |
| ບາດ | 232,13 | 232,93 | 232,53 | 233,07 | 233,88 | 233,47 | -0,40% | -0,40% | -0,40% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,38% | 0,34% | 0,37% | 0,34% | 0,28% | 0,37% | | | |
| ບາດ | 0,09% | -0,20% | -0,18% | 0,13% | -0,16% | -0,20% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 2,59% ທຽບໃສ່ວັນທີ 22/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 1,10%;
- ປະລິມານເງິນ M2 ຫຼຸດລົງ 0,51% ເມື່ອທຽບໃສ່ວັນທີ 22/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,99%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 25-28/07/2016) ເຫັນວ່າ ທຫກ ຊື້ໂດລາສຸດທິ 16,05 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 65,81 ລ້ານໂດລາ ແລະ ຂາຍໂດລາໄດ້ 49,77 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.331,06 ລ້ານບາດ (ໃນນີ້ ຊື້ບາດໄດ້ 279,46 ລ້ານບາດ ແລະ ຂາຍບາດໄດ້ 1.610,52 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 42,59% ແລະ ເພີ່ມຂຶ້ນ 33,15% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 2,95 ລ້ານໂດລາ ແລະ ເງິນບາດມີຈຳນວນ 70 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທຫກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 10,25 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 27 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 0,92 ລ້ານໂດລາ ແຕ່ບໍ່ມີການຊື້-ຂາຍເງິນບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 18-22/07/2016 | | ອາທິດທີ 25-28/07/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **50,81** | **218,51** | **65,81** | **279,46** | **29,54%** | **27,89%** |
| - ທ/ຄທຸລະກິດລັດ | 16,90 | 118,40 | 14,05 | 109,78 | -16,87% | -7,28% |
| - ທ/ຄທຸລະກິດອື່ນໆ | 33,90 | 100,11 | 51,76 | 169,68 | 52,68% | 69,50% |
| **2. ການຂາຍເງິນຕາຕ່າງປະເທດ** | **30,25** | **1.200,89** | **49,77** | **1.610,52** | **64,50%** | **34,11%** |
| - ທ/ຄທຸລະກິດລັດ | 14,53 | 193,55 | 21,35 | 175,89 | 46,95% | -9,12% |
| - ທ/ຄທຸລະກິດອື່ນໆ | 15,73 | 1.007,34 | 28,42 | 1.434,63 | 80,71% | 42,42% |
| ຊື້-ຂາຍສຸດທິ ທທກ | **20,55** | **-982,37** | **16,05** | **-1.331,06** | **-21,93%** | **35,49%** |
| ຜິດດ່ຽງ ຊື້-ຂາຍ | 40,45% | -449,57% | 24,38% | -476,29% | -39,73% | 5,94% |
| ມູນຄ່າການຊື້-ຂາຍ | **81,06** | **1.419,40** | **115,58** | **1.889,98** | **42,59%** | **33,15%** |
| **3. ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-8.35** | **-17.00** | **-10.25** | **-27.00** | | |
| - ທຫລ ຊື້ຈາກ ທທກ | 0.00 | 0.00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 8.35 | 17.00 | 10.25 | 27.00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0.41** | **0.00** | **2.95** | **70.00** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **-19.92** | **0.22** | **0.92** | **0.00** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0.09 | 0.22 | 0.93 | 0.00 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 20.01 | 0.00 | 0.00 | 0.00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 06/2016 ຢູ່ໃນລະດັບ 1,62% ເພີ່ມຂຶ້ນ 1,17% ຈາກ 0,45% ໃນເດືອນ 05/2016 ສາເຫດຂອງການເພີ່ມຂຶ້ນແມ່ນມາຈາກການປັບຂຶ້ນຂອງລາຄານ້ຳມັນເຊື້ອໄຟ ຊຶ່ງສົ່ງຜົນໃຫ້ໝວດຄົມມະນາຄົມ-ຂົນສົ່ງ ເພີ່ມຂຶ້ນ 1,18% ມາເປັນ 2,19% ບວກກັບໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ ເພີ່ມຂຶ້ນ 0,89% ທຽບໃສ່ ເດືອນຜ່ານມາ ເປັນຕົ້ນແມ່ນລາຄາປະເພດເຂົ້າສານ ເພີ່ມຂຶ້ນ 1,08%; ລາຄາຊີ້ນເພີ່ມຂຶ້ນ 0,19% ແລະ ຜັກສົດຕ່າງໆ ເພີ່ມຂຶ້ນ 5,65%.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 111,13 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 43,6% ທຽບໃສ່ອາທິດຜ່ານມາ.

III. ວຽກງານວິຊາສະເພາະ

1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (22-28/07/2016) ມີຈຳນວນ 2.046 ຄັ້ງ ໂດຍມີມູນຄ່າ 518,43 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ຈຳນວນ 538 ຄັ້ງ.

2. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.014,27 ຈຸດ ຫຼຸດລົງ 7,48% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 129.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 685,85 ລ້ານກີບ ເພີ່ມຂຶ້ນ 193,63% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 46,26% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.800 ກີບ/ຮຸ້ນ ເພີ່ມຂຶ້ນ 139 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 7.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 35,52 ລ້ານກີບ ຫຼຸດລົງ 60,51% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 10% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.333 ກີບ/ຮຸ້ນ ຫຼຸດລົງ 179 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 121.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 649,55 ລ້ານກີບ ເພີ່ມຂຶ້ນ 430,83% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50,45% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວິນ ມະຫາຊົນ (LWPC) ມີລາຄາປິດ 6.400 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍຮຸ້ນ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.600 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,78 ລ້ານກີບ ຫຼຸດລົງ 96,05% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.000 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍຮຸ້ນ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

2. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການ: ❶ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກປະທານສະພາບໍລິຫານ ທະນາຄານຫວຽດຕິນ ທີ່ ທຫລ, ❷ເປັນປະທານ ແລະ ເຂົ້າຮ່ວມກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ປະຈຳເດືອນ ກໍລະກົດ ຄັ້ງທີ 2 ທີ່ ທຫລ, ❸ເຂົ້າຮ່ວມກອງປະຊຸມຄະນະເກັບລາຍຮັບ ທີ່ກະຊວງການເງິນ, ❹ເຂົ້າຮ່ວມກອງປະຊຸມຜູ້ວ່າການ ທະນາຄານກາງ CLMV ທີ່ນະຄອນຫຼວງຢາງກຸ້ງ ປະເທດມຽນມາ, ❺ເຂົ້າຮ່ວມງານເປີດເຂດພັດທະນາຄົບວົງຈອນໜອງທາ ຂອງທະນາຄານ BIDV ທີ່ນະຄອນຫຼວງວຽງຈັນ, ❻ເຂົ້າຮ່ວມງານພົບປະລະຫວ່າງພະນະທ່ານນາຍົກລັດຖະມົນຕີກັບພາກທຸລະກິດ ແລະ ງານມອບລາງວັນທຸລະກິດດີເດັ່ນຂອງ ສປປ ລາວ 2016 ເນື່ອງໃນໂອກາດວັນສະຖາປະນາ ສປປ ລາວ ຄົບຮອບ 40 ປີ, ເນື່ອງໃນໂອກາດການເປັນປະທານສະພາທີ່ປຶກສາທຸລະກິດອາຊຽນ 2016 ຂອງ ສປປ ລາວ ແລະ ວັນສ້າງຕັ້ງ ສຄອ ແຫ່ງຊາດລາວ ຄົບຮອບ 25 ທີ່ ໂຮງແຮມ ດອນຈັນພາເລດ;
- ສຳເລັດການຈັດ: ❶ກອງປະຊຸມສຳມະນາ ໃນຫົວຂໍ້: "ຕິດຕາມກວດກາຄວາມປອດໄພຂອງຕະຫຼາດການເງິນ ຜ່ານການເຄື່ອນໄຫວກວດກາຄວາມສ່ຽງຂອງຕະຫຼາດຫຼັກຊັບ" ທີ່ ຕະຫຼາດຫຼັກຊັບລາວ, ❷ພິທີຮັບຟັງປະຖະກາຖາ ເນື່ອງໃນ

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສຳລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສຳລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ໂອກາດວັນສ້າງຕັ້ງ ສະຫະພັນແມ່ນຍິງລາວ ຄົບຮອບ 61 ປີ ທີ່ ສທຄ, ❸ສຳມະນາ ແລະ ປະຊຸມ ໃນຫົວຂໍ້: "15th SEACEN Advanced Course on Payment and Settlement Systems for Emerging Economies" ແລະ ຫົວຂໍ້: "SEACEN Coference of Directors of Payment and Settlement Systems of Asia-Pacific Central Banks and 15th Meeting of SEACEN Directors of Payment and Settlement Systems " ຢູ່ປະເທດມາເລເຊຍ, ❹ກອງປະຊຸມປຶກສາຫາລືວຽກງານຕ່າງໆທີ່ຕິດພັນກັບການເຂົ້າເປັນສະມະຊິກ ໃນໂຄງການ LAPS ຮ່ວມກັບທະນາຄານ ICB ແລະ SACOM;

- ສຳເລັດການເຂົ້າຮ່ວມ: ❶ກອງປະຊຸມປຶກສາຫາລື ແລະ ຜ່ານຮູບແບບກ່ຽວກັບການຄຸ້ມຄອງກອງທຶນ ແລະ ວາງແຜນການດຳເນີນງານຂອງ ຄະນະຮັບຜິດຊອບກະກຽມສ້າງຕັ້ງກອງທຶນສົ່ງເສີມ ແລະ ສະຫະກອນ ທີ່ກົມສົ່ງເສີມ ແລະ ສະຫະກອນ ກະຊວງກະສິກຳ ແລະ ປ່າໄມ້, ❷ກອງປະຊຸມປຶກສາຫາລື ແລະ ຄັດເລືອກຫົວຂໍ້ສຳລັບສ້າງຮູບເງົາປະຊາສຶກສາດ້ານການເງິນ ຮ່ວມກັບ ອົງການ VFI ແລະ ໂຄງການ AFP-GIZ.

3. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ກະກຽມການ: ❶ເປັນປະທານຊີ້ນຳກອງປະຊຸມຄົ້ນຄວ້າຮ່າງປະມວນກົດໝາຍອາຍາ ທີ່ ທຫລ, ❷ເຂົ້າຮ່ວມປະຊຸມຜົນການເຂົ້າຮ່ວມປະຊຸມຜູ້ວ່າການ CLMV ທີ່ຫ້ອງການສຳນັກງານນາຍົກລັດຖະມົນຕີ, ❸ເຂົ້າຮ່ວມເປັນປະທານກອງປະຊຸມເປີດກວ້າງຄະນະພັກ ທຫລ ຄັ້ງທີ IV ສະໄໝທີ III ທີ່ ທຫລ, ❹ເຂົ້າຮ່ວມກອງປະຊຸມທະນາຄານສົ່ງເສີມກະສິກຳທົ່ວປະເທດ ທີ່ ທສກ, ❺ເຂົ້າຮ່ວມກອງປະຊຸມທ່ານນາຍົກ-ຮອງນາຍົກປະຈຳເດືອນ ສິງຫາ 2016 ທີ່ຫ້ອງການສຳນັກງານນາຍົກລັດຖະມົນຕີ, ❻ເຂົ້າຮ່ວມກອງປະຊຸມພົບປະຄະນະຜູ້ແທນຈາກສະພາແຫ່ງຊາດ (ຫໍວັດທະນະທຳ), ❼ເຂົ້າຮ່ວມພິທີເປີດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນ ທີ່ ໂຮງແຮມດອນຈັນ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❸ຄົ້ນຄວ້າການສ້າງລະບຽບ ການຄຸ້ມຄອງລະບົບເຄືອຂ່າຍ ແລະ ແມ່ຂ່າຍພາຍໃນ ທຫລ, ❹ຄົ້ນຄວ້າປັບປຸງຄືນ ກ່ຽວກັບກົດລະບຽບພາຍໃນສະຫະກອນອອມຊັບ ທຫລ;
- ສືບຕໍ່ສ້າງປຶ້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2016;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈຳປີ 2016;
- ກະກຽມເຂົ້າຮ່ວມກອງປະຊຸມສຸດຍອດລະດັບພາກພື້ນ ເພື່ອຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ປະເທດອິນໂດເນເຊຍ;
- ກະກຽມຈັດສຳມະນາໃນຫົວຂໍ້: "Due Deligence checklist for sumitting filing to Lao Securities ທີ່ຕະຫຼາດຫຼັກຊັບລາວ.

ຣ. ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ສຸກັນ ຈັນທະວົງ